# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 25 -ມີຖຸນາ- 2006 (6-25-006)

## ຕີໂມທຽວ: ຄວາມເຊື່ອທີ່ຍຶດໝັ້ນກັບພຣະເຈົ້າກ່ອນອື່ນໝົດ

**ຂໍ້ພຣະຄັມພີໃນບົດຮຽນ:** 2 ຕີໂມທຽວ 1:3-8, 13-14; 2:1-7

**ພຣະຄັມພີແຫ່ງຄວາມຈິງ:** ຜູ້ທີ່ມີຄວາມເຊື່ອຈະຕ້ອງຍຶດໝັ້ນກັບພຣະເຈົ້າກ່ອນອື່ນໝົດ ແລະພາຣະກິດທີ່ພຣະອົງຊົງມອບໝາຍໃຫ້.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ອອກແບບເພື່ອຊ່ອຍເສີມສ້າງຄວາມເຊື່ອຂອງທ່ານໃຫ້ເຂັ້ມແຂງແລະຄົງທົນຕລອດໄປ:

- ໃຫ້ເຂົ້າໃຈວ່າ ເຖິງແມ່ນວ່າຜູ້ທີ່ມີຄວາມເຊື່ອຈົນເຖິງລະດັບວ່າເປັນຜູ້ໃຫຍ່ໃນຄວາມເຊື່ອແລ້ວກໍຕາມ ພວກເຂົາອາດຈະຕ້ອງການອຸທິດຕົວໃຫ້ກັບພຣະເຈົ້າໃໝ່; ແລະ
- ໃຫ້ທ່ານອຸທິຕົວຂອງທ່ານກ່ອນ ເພື່ອທ່ານຈະໄດ້ຍຶດໝັ້ນກັບພຣະເຈົ້າກ່ອນອື່ນໝົດ ແລະພາຣະກິດຂອງພຣະອົງຢູ່ໃນທຸກສະພາບການ.

## ຂ້າພະເຈົ້າຄວນຈະເຮັດຢ່າງໃດ<br>ເມື່ອຂ້າພະເຈົ້າຖືກທົດລອງບໍ່ໃຫ້ຍຶດໝັ້ນກັບພຣະເຈົ້າກ່ອນອື່ນໝົດ?

ໃນວັນອາທິດເຊົ້າມື້ນຶ່ງ ພໍ່ໄດ້ປຸກລູກຊາຍນ້ອຍວ່າ "ອ້າຍເຈົ້າແລະຂ້ອຍຈະໄປເບິ່ງການແລ່ນແຂ່ງມື້ນີ້. ເຈົ້າບໍ່ໄປນຳພວກຂ້ອຍບໍ?" ລູກຊາຍນ້ອຍເລີຍຕອບພໍ່ໄປວ່າ "ບໍ່ ຂ້ານ້ອຍໄປບໍ່ໄດ້ ຂ້ານ້ອຍຈະໄປໂບດເຊົ້າມື້ນີ້."

"ອ້າຍຂອງເຈົ້າບໍ່ຄ່ອຍໄດ້ມາຢາມພວກເຮົາ" ພໍ່ຖາມຕໍ່ໄປວ່າ "ເຈົ້າແນ່ໃຈແລ້ວບໍວ່າຈະບໍ່ໄປນຳພວກເຮົາ?" ລູກຊາຍນ້ອຍເນັ້ນໜັກໃຫ້ພໍ່ຂອງລາວຮູ້ວ່າ ວັນອາທິດເປັນວັນສຳຄັນຂອງຜູ້ເປັນລູກ. ສ່ວນພໍ່ແລະລູກຊາຍໃຫຍ່ກໍໄປເບິ່ງການແຂ່ງຂັນ, ແຕ່ສ່ວນລູກຊາຍນ້ອຍນັ້ນໄປໂບດ.

ຄົນໃນຄອບຄົວນີ້ ແມ່ນໃຜເປັນຜູ້ທີ່ຍຶດໝັ້ນກັບພຣະເຈົ້າກ່ອນອື່ນໝົດ? ບົດຮຽນນີ້ຈະຊ່ອຍໃຫ້ພວກເຮົາເຂົ້າໃຈໃນຄວາມສຳຄັນຂອງການຍຶດໝັ້ນກັບພຣະເຈົ້າກ່ອນອື່ນໝົດ ແລະພາຣະກິດຂອງພຣະອົງຊົງມອບໝາຍໃຫ້.

## ສຶກສາພຣະຄັມພີ

### 1. ທວນຄິດເຖິງການອຸທິດຕົນໃຫ້ກັບພຣະເຈົ້າ (2 ຕີໂມທຽວ 1:3-7)

ການມາຮູ້ຈັກກັບພຣະເຈົ້າຂອງໂປໂລແລະຕີໂມທຽວມີວິທີແຕກຕ່າງກັນ. ໂປໂລໄດ້ມາຮູ້ຈັກກັບພຣະຄຣິດໃນຄາວລາວເປັນຜູ້ໃຫຍ່ແລ້ວ ແຕ່ສ່ວນຕີໂມທຽວໄດ້ເຕີບໃຫຍ່ໃນຄອບຄົວທີ່ມີແມ່ແລະແມ່ເຖົ້າເປັນຜູ້ທີ່ສິດສອນລາວໃນເຣື່ອງຄວາມເຊື່ອ. ເມື່ອໂປໂລເດີນທາງໄປປະກາດຂ່າວປະເສີດຄັ້ງທີນຶ່ງ ລາວຄົງຈະໄປທຳຄວາມຄຸ້ນເຄີຍກັບຄອບຄົວຂອງ **ນາງໂລອີ** ແມ່ເຖົ້າ ແລະ **ນາງຢູນີເກ** ແມ່ຂອງຕີໂມທຽວ. ລາວໄດ້ຕຶກຕອງເບິ່ງແລ້ວວ່າຄອບຄົວນີ້ **ມີຄວາມເຊື່ອອັນຈິງໃຈ** ແລະລາວໄດ້ເຫັນ **ຄວາມເຊື່ອ** ຢ່າງນີ້ຢູ່ໃນຕີໂມທຽວຄືກັນ.

ລູກາໄດ້ບັນທຶກເຫດການຂອງການເດີນທາງໄປປະກາດຄັ້ງທີສອງຂອງໂປໂລໃນຂົງເຂດນັ້ນ. ພວກເຮົາໄດ້ພົບວ່າຕີໂມທຽວເປັນຄົນມີຊື່ສຽງດີໃນທ່າມກາງພວກພີ່ນ້ອງທີ່ມີຄວາມເຊື່ອ ໃນຂນະນີ້ ຕີໂມທຽວໄດ້ເດີນທາງຮ່ວມກັບໂປໂລ (ກິຈການ 16:1-3). ໂປໂລຮັກຕີໂມທຽວເໝືອນກັບລູກ. ລາວເອີ້ນຕີໂມທຽວວ່າ "ລູກທີ່ຮັກຂອງເຮົາ ຜູ້ສັດຊື່ໃນອົງ

ພຣະຜູ້ເປັນເຈົ້າ" (1 ໂກຣິນໂທ 4:17). ລາວໄດ້ບັນລະຍາຍເຖິງຄວາມສັມພັນລະຫວ່າງລາວກັບຕີໂມທຣວວ່າ "ລູກຮັບໃຊ້ພໍ່" (ຟີລິບປອຍ ໒:໒).

ໂປໂລໄດ້ຂຽນ ໒ ຕີໂມທຣວ ໃນຂນະທີ່ລາວຢູ່ໃນຄຸກໃນກຸງໂຣມ ກ່ອນລາວຈະຖືກນຳໄປປະຫານຊີວິດ. ລາວໄດ້ກ່າວຕໍ່ຕີໂມທຣວວ່າ ລາວຂອບຄຸນພຣະເຈົ້າສຳລັບຕີໂມທຣວແລະລາວໄດ້ອ້ອນວອນເພື່ອຕີໂມທຣວ **ທັງກາງເວັນແລະກາງຄືນ.** ລາວລໍຄອຍເວລາທີ່ຈະໄດ້ພົບເພື່ອນທີ່ຮັກແພງເພື່ອລາວຈະໄດ້ມີ **ຄວາມຍິນດີຢ່າງເຕັມໃຈ.** ພວກເຂົາຈະຊື່ນຊື່ນຍິນດີໃນ**ຄວາມເຊື່ອ.** ເປັນພຣະພອນອັນລົ້ນເຫລືອທີ່ຕີໂມທຣວໄດ້ມີອັຄທູດຜູ້ປະເສີດອ້ອນວອນເພື່ອລາວແລະເປັນຜູ້ທີ່ໃຫ້ກຳລັງໃຈລາວເຫມືອນກັບພີ່ລ້ຽງ.

ບາງຄັ້ງ ຜູ້ປະກາດຂ່າວປະເສີດມີຄວາມນ້ອຍໃຈ ຄິດວ່າຜູ້ທີ່ສົ່ງພວກເຂົາໄປນັ້ນໄດ້ຫລົງລືມພວກເຂົາ. ມີທາງນຶ່ງທີ່ຈະໃຫ້ກຳລັງໃຈແກ່ພວກເຂົາ ກໍຄືຂຽນຈົດຫມາຍໄປຫາພວກເຂົາ ຫລື ສົ່ງ email ໄປທາງ internet ບອກພວກເຂົາວ່າພວກເຮົາບໍ່ໄດ້ປະໃນການອ້ອນວອນເພື່ອພວກເຂົາຢູ່ທຸກເວລາ. ຖ້າບໍ່ຮູ້ຈັກທີ່ຢູ່ຂອງພວກເຂົາກໍໃຫ້ຕິດຕໍ່ໄປທາງກອງປະກາດຂ່າວປະເສີດໃນຕ່າງປະເທດ International Mission Board 1-800-999-3113. ພວກເຂົາຈະຊື່ນຊື່ນຍິນດີຫລາຍທີ່ມີພວກເຮົາຄິດເຖິງພວກເຂົາຢູ່. ໃນຂນະທີ່ຂ້າພະເຈົ້າແລະເມັຽຮັບໃຊ້ຢູ່ ໂຄລົມເບັຽ ອາເມຣິກາໃຕ້ ພວກຂ້າພະເຈົ້າຮູ້ວ່າມີພີ່ນ້ອງຄຣິສຕຽນໄດ້ອ້ອນວອນເພື່ອໃນວັນເກີດຂອງພວກຂ້າພະເຈົ້າ. ບໍ່ພຽງແຕ່ເທົ່ານັ້ນ ໃນວັນອື່ນໆພວກເພິ່ນໄດ້ອ້ອນວອນເພື່ອ ພວກເພິ່ນບໍ່ໄດ້ຫລົງລືມພວກຂ້າພະເຈົ້າເລີຍ. ພວກຂ້າພະເຈົ້າບໍ່ສາມາດຫາຄຳເວົ້າອັນໃດທີ່ຈະສະແດງອອກເຖິງຄວາມຊື່ນຊື່ນຍິນດີແລະຮູ້ບຸນຄຸນ ເຖິງແມ່ນວ່າພວກຂ້າພະເຈົ້າຈະຮັບໃຊ້ຢູ່ໃນຄວາມລຳບາກປານໃດກໍຕາມ.

ໂປໂລມີຄວາມຍິນດີທີ່ໄດ້ມີຄວາມສັມພັນກັບຕີໂມທຣວ. ລາວຮັບຮູ້ວ່າ ຕີໂມທຣວມີຄວາມເຊື່ອທອດມາຈາກບັນພະບູຣຸດຂອງລາວ ໂປໂລໄດ້ຫນູນໃຈໃຫ້ຕີໂມທຣວ **ໃຫ້ເປົ່າຄຸນທັມຂອງພຣະເຈົ້າ** ຊຶ່ງລາວໄດ້ຮັບນັ້ນ **ໃຫ້ລຸກຮຸ່ງເຮືອງຂຶ້ນໃຫມ່.** ເນື່ອງຈາກວ່າວັນເວລາຂອງໂປໂລໃກ້ເຂົ້າມາເຕັມທີ ຕີໂມທຣວມີຄວາມທຸກໃຈຫລາຍ. ຕີໂມທຣວຄົງຈະສູນເສັຽເພື່ອນທີ່ເຫັນອົກເຫັນໃຈແລະພໍ່ໃນຄວາມເຊື່ອທີ່ໃຫ້ກຳລັງໃຈຕລອດມາ. ຄວາມເຊື່ອຂອງຕີໂມທຣວຖືກທົດສອບໃນສະພາບການອັນຂຸ້ນເຄືອງ. ແຕ່ໂປໂລໄດ້ເຕືອນຕີໂມທຣວວ່າ **ພຣະເຈົ້າບໍ່ໄດ້ຊົງປະທານໃຈອັນຢ້ານກົວໃຫ້ແກ່ເຮົາ ແຕ່ໄດ້ຊົງປະທານໃຈອັນປະກອບດ້ວຍຣິດອຳນາດ ຄວາມຮັກ ແລະການບັງຄັບຕົນໃຫ້ແກ່ເຮົາ.** ຕາບທີ່ພວກເຮົາຈຳໄດ້ວ່າໃຫ້ພວກເຮົາອຸທິດຕົນໃຫ້ພຣະເຈົ້າ ແລະຜູ້ທີ່ມີຄວາມເຊື່ອຈະຕ້ອງໃຫ້ພຣະເຈົ້າກ່ອນອື່ນຫມົດໃນຊີວິດຂອງພວກເຮົາ.

- ♦ ໃນການວັດແທກຕັ້ງແຕ່ 1-5 ຄົນອື່ນເຂົາສັ່ງຊາເບິ່ງທ່ານໃນການສຸມໃສ່ກັບພຣະເຈົ້າທ່ານຈະຢູ່ໃນຂັ້ນໃດ?
- ♦ ການມາຮູ້ຈັກກັບພຣະເຈົ້າຂອງທ່ານຄ້າຍຄືກັບຂອງໂປໂລ ຫລືຂອງຕີໂມທຣວຫລືບໍ່?
- ♦ ທ່ານມີຄວາມສັດທາໃນຜູ້ໃດຫລາຍ? ເປັນຫຍັງ?
- ♦ ຄົນອື່ນເຂົານັບຖືທ່ານບໍ່? ເປັນຫຍັງ ຫລື ເປັນຫຍັງບໍ່?
- ♦ ແມ່ນຫຍັງເຮັດໃຫ້ທ່ານອ້ອນວອນເພື່ອຄົນນັ້ນທັງກາງເວັນແລະກາງຄືນ?
- ♦ ທ່ານມີຫນ້າທີ່ຮັບຜິດຊອບອັນໃດຈຶ່ງອ້ອນວອນເພື່ອຜູ້ປະກາດຂ່າວປະເສີດ?
- ♦ ໂປໂລໄດ້ຫນູນໃຈໃຫ້ຕີໂມທຣວໃຫ້ຍຶດຫມັ້ນກັບພຣະເຈົ້າໃນຊີວິດຂອງລາວດ້ວຍວິທີຢ່າງໃດ?
- ♦ ທ່ານເຄີຍໄດ້ຮັບການຫນູນໃຈຈາກຄຣິສຕຽນອາວຸໂສທີ່ໃຫ້ກຳລັງໃຈທ່ານຫລືບໍ່? ທ່ານສາມາດເປັນຜູ້ໃຫ້ກຳລັງໃຈແກ່ຜູ້ໃດບໍ່?

**໒. <u>ເຝົ້າລະວັງເບິ່ງຢ່າຫລົບກັບທາງເກົ່າ</u>** (໒ ຕີໂມທຣວ 1:8; 13-14)

ອຸທິດຕົນໃຫ້ກັບຂ່າວປະເສີດໃນສະພາບຄວາມລຳບາກເປັນການທ້າທາຍອັນໃຫຍ່. ໂປໂລຈຶ່ງຫນູນໃຈຕີໂມທຣວໃຫ້ເພິ່ງໃນ **ຣິດອຳນາດແຫ່ງພຣະເຈົ້າ.** ປາສຈາກຣິດອຳນາດຂອງພຣະອົງແລ້ວ ພວກເຮົາບໍ່ສາມາດຈະປະເຊີນກັບຄວາມຍາກລຳບາກໃນຊີວິດດ້ວຍຄວາມສງົບໃນຈິດໃຈຢ່າງມີຊັຍ. ຫລາຍຄົນໄດ້ຊອກສແວງຫາຄວາມພໍໃຈໃສ່ຕົວເອງເສັຽ

ກ່ອນ ແທນທີ່ຈະເອົາພຣະເຈົ້າກ່ອນອື່ນຫມົດໃນຊີວິດຂອງພວກເຂົາ. ບາງຄົນເຊື່ອວ່າພຣະເຈົ້າຊົງພໍໃຈໃນສິ່ງທີ່ເສດເຫລືອ ເຊັ່ນເວລາ ຄວາມສາມາດ ແລະເງິນ. ໃຫ້ພຣະເຈົ້າໃນສິ່ງທີ່ເສດເຫລືອຈະນຳໄປສູ່ຄວາມກັງວົນແລະສິ້ນຫວັງ.

ຜູ້ທີ່ມີຄວາມເຊື່ອທີ່ຮັກພຣະເຈົ້າເຫນືອກວ່າທຸກສິ່ງຈະຕ້ອງເຝົ້າຣະວັງຢ່າໃຫ້ອັນໃດມາເປັນຄູ່ແຂ່ງກັບພຣະເຈົ້າ. ພວກເຮົາຢູ່ໃນສັງຄົມທີ່ມີຫລາຍສິ່ງຫລາຍຢ່າງທີ່ຈະມາຍາດແຍ່ງເອົາຄວາມຈົງຮັກພັກດີຂອງພວກເຮົາໄປຈາກພຣະເຈົ້າ. ກິລາ ງານມ່ວນຊື່ນ ແລະວຽກງານ ສາມາດຍາດເອົາເວລາໄປຈົນເກືອບຫມົດທີ່ຈະເຫລືອເວລາເລັກຫນ້ອຍໃຫ້ກັບພຣະເຈົ້າ. ມີຫລາຍຄົນຮັກເງິນຄຳຫລາຍກວ່າຮັກພຣະເຈົ້າ. ການເຂົ້າເຝົ້າພຣະເຈົ້າ ການໄປໂບດ ການພົວພັນໃນການຮັບໃຊ້ຜູ້ທີ່ເຈັບປ່ວຍກໍບໍ່ມີເລີຍ. ມີຫລາຍຄົນຄິດແຕ່ວ່າ ຂໍໃຫ້ຂ້ອຍມີຄວາມສນຸກສະບາຍນັ້ນແຫລະຄືເປົ້າຫມາຍຂອງຊີວິດ. ເຖິງຢ່າງໃດກໍຕາມ ໃນພຣະທັມຕອນໃດແດ່ທີ່ໄດ້ບົ່ງບອກວ່າຄວາມຄິດຢ່າງນັ້ນຈະພົບຄວາມສົມບູນໃນເປົ້າຫມາຍຂອງຊີວິດ.

ອັຄທູດໂປໂລບໍ່ເຫັນວ່າ ຄວາມທຸກລຳບາກໃນຫ້ອງໃຕ້ດິນຂອງຄຸກກັກຂັງໃນກຸງໂຣມເປັນຂອງແປກເລີຍ. ຊ້ຳບໍ່ຫນຳ ລາວຍັງຫນູນໃຈຕີໂມທຽວໃຫ້ **ມີສ່ວນໃນການລຳບາກເພື່ອເຫັນແກ່ຂ່າວປະເສີດ.** ຜູ້ປະກາດຂ່າວປະເສີດສອງຄົນທີ່ຮັກແພງກັບພວກຂ້າພະເຈົ້າຖືກຂ້າຕາຍໃນການຮັບໃຊ້. ຣົດຂອງເພື່ອນຜູ້ຮັບໃຊ້ສາມຄົນຖືກລັກ. ອີກຜູ້ນຶ່ງຖືກຈັບໄປຮຽກເອົາຄ່າໄຖ່ແລະຕໍ່ມາລາວຖືກປ່ອຍຕົວ. ເພື່ອນຂ້າງບ້ານຂອງພວກຂ້າພະເຈົ້າຖືກພວກແກ໊ງລັດຕີ. ແລະພວກເຂົາຍັງຮັບໃຊ້ພຣະເຈົ້າຢູ່ດ້ວຍຄວາມຍິນດີ. ບໍ່ໄດ້ຫມາຍຄວາມວ່າຜູ້ປະກາດຂ່າວປະເສີດມີພຊາຕໍ່ຄວາມທຸກຍາກລຳບາກແລະບັນຫາທີ່ຕາມມາ. ເຖິງຢ່າງໃດກໍຕາມ ພວກເຂົາເຫັນວ່າມີພາກສ່ວນໃນຂ່າວປະເສີດແລ້ວໄດ້ຮັບຄວາມລຳບາກຕ່າງໆກໍກຸ້ມຄ່າຫລາຍ.

ເປັນຫຍັງຂ່າວປະເສີດຈຶ່ງມີຄຸນຄ່າພໍທີ່ຈະໄປຮັບຄວາມທຸກລຳບາກຍ້ອນ? ມະນຸດຕ້ອງການຄວາມສັມພັນກັບພຣະເຢຊູ. ມີທາງດຽວເທົ່ານັ້ນທີ່ມະນຸດຈະມີສັນຕິສຸກກັບພຣະເຈົ້າ ກໍຕໍ່ເມື່ອມີຄວາມສັມພັນກັບພຣະເຢຊູ. ພຣະເຢຊູເທົ່ານັ້ນທີ່ຈະປະທານຊີວິດອັນຕລອດໄປເປັນນິດ.

ເຖິງແມ່ນວ່າອັຄທູດໂປໂລຍົກຍ້ອງວ່າ ຕີໂມທຽວເປັນຜູ້ທີ່ມີຄວາມເຊື່ອຫລາຍກໍຕາມ ລາວຮູ້ດີວ່າຖ້າຕີໂມທຽວບໍ່ສຸມໃສ່ພຣະເຈົ້າ ຕີໂມທຽວກໍຈະປະຖິ້ມ **ຄຳສອນອັນມີຫລັກ.** ລາວບອກຕີໂມທຽວ **ຈົ່ງຮັກສາສິ່ງອັນດີທີ່ໄດ້ຊົງມອບໄວ້ກັບເຈົ້າ.** ຂ່າວປະເສີດເປັນຂອງດີແລະຈຳເປັນຕ້ອງປະກາດໃຫ້ຄົນອື່ນຮູ້. ໂປໂລຮູ້ວ່າໃນບໍ່ຊ້າລາວຈະຕ້ອງຈາກໂລກນີ້ໄປ ແຕ່ຕີໂມທຽວຈະຕ້ອງດຳເນີນງານການປະກາດຕໍ່ໄປ.

ເຖິງແມ່ນວ່າມີຫລາຍສິ່ງຫລາຍຢ່າງມາດຶງພວກເຮົາໄປຫລາຍທິດຫລາຍທາງກໍຕາມ ພວກເຮົາຈະຕ້ອງສຸມໃສ່ຜູ້ທີ່ປະທານຊີວິດຂອງພຣະອົງເອງໃຫ້ແກ່ພວກເຮົາ ເພື່ອພວກເຮົາຈະມີຊີວິດອັນຕລອດໄປແລະຄົບບໍຣິບູນ. ພຣະເຢຊູຊົງເປັນຜູ້ຄ້ຳຈຸນພວກເຮົາແລະພຣະອົງຊົງປະທານພະລັງໃຫ້ແກ່ພວກເຮົາ. ແນ່ນອນ ພຣະອົງເທົ່ານັ້ນທີ່ພວກເຮົາຍອມອຸທິດໃຫ້ຈົນຫມົດ. ພຣະເຈົ້າສົມຄວນທີ່ຈະຕ້ອງເປັນນ້ຳເບີນຶ່ງໃນຊີວິດແລະຈິດໃຈຂອງພວກເຮົາ.

- ♦ ມີກິຈການສາມຢ່າງທີ່ສາມາດເຮັດໃຫ້ທ່ານຫລົບຫລີກຈາກການຮັບໃຊ້ພຣະເຈົ້າ? 1. 2. 3.
- ♦ ເປັນຫຍັງໃຫ້ພຣະເຈົ້າໃນສິ່ງທີ່ເສດເຫລືອຈະນຳໄປສູ່ຄວາມກັງວົນແລະສິ້ນຫວັງ?
- ♦ ຖ້າຫາກວ່າພຣະເຈົ້າປ່ອຍທ່ານໄວ້ໃນບ່ອນທີ່ທ່ານໄດ້ຮັບຄວາມລຳບາກເພື່ອຂ່າວປະເສີດ ທ່ານຈະເຮັດຢ່າງໃດ?
- ♦ ທ່ານເຫັນວ່າມີພາກສ່ວນໃນຂ່າວປະເສີດແລ້ວໄດ້ຮັບຄວາມລຳບາກຕ່າງໆຈະກຸ້ມຄ່າຫລືບໍ່?
- ♦ ທ່ານມີວິທີການອັນໃດຈຶ່ງຈະບໍ່ຖືກດຶງໄປຫລາຍທິດຫລາຍທາງໃນອາທິດນີ້?

### 3. <u>ສຸມໃສ່ໃນພາຣະກິດຂອງພຣະເຈົ້າ</u> (2 ຕີໂມທຽວ 2:1-7)

ທ່ານເຄີຍມີຄວາມຮູ້ສຶກວ່າທ່ານຖືກຫຸ້ມຮັດກັບວຽກງານຕ່າງໆຈົນບໍ່ຮູ້ຈັກວ່າຈະເຮັດຢ່າງໃດບໍ່? ບໍ່ແມ່ນທ່ານຜູ້ດຽວດອກທີ່ປະເຊີນກັບບັນຫາຢ່າງນັ້ນ. ບໍ່ນານມານີ້ ມີຜູ້ນໍາຂອງໂບດຄົນນຶ່ງໄດ້ລົມກັບຂ້າພະເຈົ້າວ່າ "ຂ້ອຍຮູ້ສຶກວ່າຖືກດຶງໄປຫລາຍທິດຫລາຍທາງ."

ອັຄທູດໂປໂລໃຫ້ຄໍາແນະນໍາອັນສລຽວສລາດທີ່ຈະຮັບມືກັບຄວາມກົດດັນຕ່າງໆ. ລາວຮູ້ວ່າສິ່ງທີ່ພວກເຮົາສຸມໃສ່ຈະເຮັດໃຫ້ພວກເຮົາຕັດສິນໃຈສະແດງອອກທາງກິຣິຍາທ່າທາງແລະພາກປະຕິບັດດ້ວຍ. ພຣະເຈົ້າຂອງພວກເຮົາຊົງພຣະກະຣຸນາຫລາຍ ພຣະອົງຊົງໃຫ້ພວກເຮົາມີຄວາມ **ເຂັ້ມແຂງຂຶ້ນດ້ວຍພຣະຄຸນ** ເພື່ອພວກເຮົາຈະໄດ້ສຸມໃສ່ພຣະອົງ.

ໜ້າເສົ້າແທ້ໆ ມີຫລາຍຄົນໄດ້ສຸມໃສ່ **ຢູ່ກັບງານຝ່າຍພົລເຮືອນ** ຫມາຍຄວາມວ່າງານປະຈໍາວັນ. ເປັນສິ່ງທີ່ງ່າຍແຕ່ບໍ່ແມ່ນຄວາມຄິດອັນສລາດ. ເຖິງແມ່ນວ່າພວກເຮົາຈະຕ້ອງຮັບຜິດຊອບວຽກງານຕ່າງໆ ສໍາລັບໂລກນີ້ ງານນີ້ບໍ່ແມ່ນງານສໍາຄັນທີ່ສຸດທີ່ພວກເຮົາຄວນຈະສຸມໃສ່ໃນຊີວິດຂອງພວກເຮົາ.

ໂປໂລໄດ້ສອນພວກເຮົາຢູ່ຊໍ້າແລ້ວຊໍ້າອີກວ່າໃຫ້ພວກເຮົາສຸມໃສ່ສິ່ງທີ່ເປັນວິນຍານ ແທນທີ່ຈະເປັນສິ່ງຂອງໃນໂລກ ລາວໄດ້ຫນູນໃຈຊາວໂກໂລຊາຍວ່າ "ຈົ່ງເອົາໃຈໃສ່ສິ່ງທີ່ຢູ່ເບື້ອງເທິງ ບໍ່ໃສ່ຊິ່ງທີ່ຢູ່ທີ່ແຜ່ນດິນໂລກ" (ໂກໂລຊາຍ 3:2). ລາວໄດ້ຈໍາແນກໃຫ້ເຫັນວ່າຜູ້ທີ່ສຸມໃສ່ສິ່ງຂອງໃນໂລກ ເຫັນແກ່ແຕ່ປາກແລະທ້ອງ "ເປັນສັດຕູຕໍ່ໄມ້ກາງແຂນ" (ຟີລິບປອຍ 3:18). ລາວມີເປົ້າຫມາຍອັນດຽວກັນກັບພຣະເຈົ້າຂອງພວກເຮົາ ພຣະເຢຊູຄຣິດ ພຣະອົງຊົງກ່າວວ່າ "ແຕ່ກ່ອນອື່ນ ຈົ່ງສແວງຫາຣາຊອານາຈັກຂອງພຣະເຈົ້າ ແລະຄວາມຊອບທັມຂອງພຣະອົງ" (ມັດທາຍ 6:33). ພຣະອົງຊົງກ່າວເຖິງຄວາມຈໍາເປັນແລະຄວາມສໍາຄັນທີ່ຈະຕ້ອງສຸມໃສ່ພຣະເຈົ້າແລະພາຣະກິດຂອງພຣະອົງ.

ຫລັກຄໍາສອນນີ້ສໍາຄັນຫລາຍຈຶ່ງຈະຕ້ອງມອບໃຫ້ **ກັບຄົນສັດຊື່ທີ່ສາມາດສອນຄົນອື່ນໄດ້ດ້ວຍ.** ຖ້າບໍ່ສອນໃຫ້ພວກເຂົາຮູ້ ພວກເຂົາກໍຈະໄປ **ຫຽຸ້ງກ່ຽວກັບງານປະຈໍາວັນ.** ຄົນສັດຊື່ເປັນຜູ້ທີ່ບໍ່ຖືກຊັກຊວນໃຫ້ຫລົງຈາກຄວາມຈິງຂອງພຣະທັມຂອງພຣະເຈົ້າ. ໂປໂລໄດ້ສົມທຽບການສຸມໃສ່ອັນແຮງກ້າຂອງຜູ້ທີ່ມີຄວາມເຊື່ອ ກັບການສຸມໃສ່ຂອງ**ທະຫານ ນັກກິລາ** ແລະ **ພໍ່ນາ.** ແຕ່ລະຄົນມີຫນ້າທີ່ຕ່າງກັນ ແຕ່ລະຄົນລໍຄອຍລາງວັນແລະກຽດຕິຍົດຈາກການງານຂອງຕົນ ຈະເປັນການຊັຍຊະນະໃນສນາມຣົບ ຫລຽນທອງຄໍາຈາກການແຂ່ງຂັນໃນສນາມກິລາ ຫລືການເກັບກ່ຽວຜົນຢ່າງມາກມາຍຈາກສວນ ຫລັງຈາກອອກເຫື່ອເທແຮງໃນຣະດູປູກຝັງ.

ອັຄທູດໂປໂລຈຶ່ງໄດ້ຫນູນໃຈຕີໂມທຽວໃຫ້ຫວນ **ຄຶດຕຶກຕອງຂໍ້ຄວາມທີ່ເຮົາເວົ້ານັ້ນໃຫ້ຖີ່ຖ້ວນ.** ຈາກຄໍາເວົ້າຂອງໂປໂລ "ພີ່ນ້ອງທັງຫລາຍເອີຍ ເຈົ້າທັງຫລາຍຈົ່ງຕັ້ງຫມັ້ນຢູ່ຢ່າຫວັ່ນໄຫວ ຈົ່ງປະຕິບັດງານຂອງອົງພຣະຜູ້ເປັນເຈົ້າໃຫ້ບໍຣິບູນທຸກເວລາ ດ້ວຍຮູ້ວ່າໃນອົງພຣະຜູ້ເປັນເຈົ້າ ການງານຂອງພວກເຈົ້າຈະບໍ່ໄຮ້ປໂຍດ" (1 ໂກຣິນໂທ 15:58).

- ♦ ທ່ານມີບາດກ້າວອັນໃດທີ່ຈະສາມາດຊ່ອຍທ່ານໃຫ້ສຸມໃສ່ໃນພາຣະກິດຂອງພຣະເຈົ້າ?
- ♦ ມີອັນໃດແດ່ທີ່ທ່ານສາມາດຕອບວ່າບໍ່ດອກ ເພື່ອທ່ານຈະສາມາດສຸມໃສ່ໃນພາຣະກິດຂອງພຣະເຈົ້າ?
- ♦ ມີອັນໃດແດ່ທີ່ເປັນຫ່ວງໃນທ້າຢ່າງນີ້? 1. 2. 3. 4. 5.
- ♦ ໃນທ້າຢ່າງທີ່ກ່າວມານີ້ເຂົ້າກັບຄໍາສອນຂອງພຣະເຢຊູໃນພຣະທັມ ມັດທາຍ 6:33 ຫລືບໍ່?
- ♦ ຜູ້ທີ່ມີຄວາມເຊື່ອໃນພຣະຄຣິດຈະເປັນເຫມືອນກັບທະຫານ ນັກກິລາ ແລະພໍ່ນາຢ່າງໃດ?
- ♦ ທ່ານຈະມອບສິ່ງທີ່ທ່ານຮູ້ກ່ຽວກັບພຣະສງ່າຣາສີຂອງພຣະເຈົ້າໃຫ້ລູກຫລານຂອງທ່ານໄດ້ຢ່າງໃດ?
- ♦ ທ່ານມີບາດກ້າວອັນໃດທີ່ຈະເອົາພຣະເຈົ້າກ່ອນອື່ນຫມົດໃນອາທິດນີ້?

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org